ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

6389

ກະຊວງສຶກສາທິການ ແລະ ກິລາ

ເລກທີ /ສສກ

ນະຄອນຫຼວງວຽງຈັນ, ວັນທີ 22 ພະຈິກ 2022

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຮັບຜິດຊອບ ວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ຂອງຂະແໜງການສຶກສາ ແລະ ກິລາ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ກົດໝາຍວ່າການຄຸ້ມຄອງໄພພິບັດ ສະບັບເລກທີ 71/ສພຊ, ລົງວັນທີ 24 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍການປ່ຽນແປງດິນຟ້າອາກາດ ສະບັບເລກທີ 321/ລບ, ລົງວັນທີ 18 ກັນຍາ 2019;
- ອີງຕາມ ການສະເໜີຂອງຫ້ອງການກະຊວງສຶກສາທິການ ແລະ ກິລາ.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງການສຶກສາ ແລະ ກິລາ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແນໃສ່ຜັນຂະຫຍາຍ, ຈັດຕັ້ງປະຕິບັດ, ພັດທະນາ ແລະ ຕິດຕາມກວດກາ ວຽກງານຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ໃນວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ໃຫ້ມີປະສິດທິຜົນສູງ ປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງການສຶກສາ ແລະ ກິລາ ແມ່ນອົງການຈັດຕັ້ງທີ່ບໍ່ປະຈຳການເຊິ່ງມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະມົນຕີໃນການຄຸ້ມຄອງ, ປ້ອງກັນ, ຕອບໂຕ້, ແກ້ໄຂຜົນຮ້າຍຈາກໄພພິບັດທຳມະຊາດ ແລະ ມະນຸດສ້າງຂຶ້ນທີ່ກະທົບໃສ່ການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ, ຕໍ່ຊັບສິນ ແລະ ຊີວິດຂອງນັກຮຽນ, ນັກສຶກສາ, ຄູ-ອາຈານ ແລະ ພະນັກງານພາຍໃນຂະແໜງການສຶກສາ ແລະ ກິລາ ຕາມຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງການສຶກສາ ແລະ ກິລາ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີຍຸດທະສາດ, ແຜນນະໂຍບາຍ, ແຜນງານ, ໂຄງການ ກ່ຽວກັບການເຊື່ອມສານວຽກງານຫຼຸດຜ່ອນຄວາມສ່ຽງໄພພິບັດ, ການປ້ອງກັນ, ຄວບຄຸມໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດໃຫ້ສອດຄ່ອງກັບແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນປ້ອງກັນ, ຄວບຄຸມ ແລະ ຕອບໂຕ້ໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດແຫ່ງຊາດ;
2. ເປັນໃຈກາງໃນການສ້າງ, ປັບປຸງນິຕິກຳຕ່າງໆກ່ຽວກັບວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດ, ການປ່ຽນແປງດິນຟ້າອາກາດໃນວຽກງານການສຶກສາ, ວິທະຍາສາດ ແລະ ກິລາ;
3. ຄົ້ນຄວ້າກົນໄກ ແລະ ວິທີການພົວພັນປະສານງານເພື່ອປ້ອງກັນ, ຮັບມືກັບໄພພິບັດ, ການປ່ຽນແປງດິນຟ້າອາກາດ ແລະ ແກ້ໄຂຜົນຮ້າຍທີ່ເກີດຈາກໄພພິບັດຂອງຂະແໜງການສຶກສາທິການ ແລະ ກິລາ;
4. ຊຸກຍູ້ບັນດາກົມ, ອົງການທຽບເທົ່າກົມ, ສູນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ, ສະຖານການສຶກສາຕ່າງໆ ຜັນຂະຫຍາຍແຜນຍຸດທະສາດ ແລະ ແຜນປະຕິບັດງານ ກ່ຽວກັບການຫຼຸດຜ່ອນຄວາມສ່ຽງໄພພິບັດ, ໂຮງຮຽນປອດໄພຮອບດ້ານ, ແຜນຕອບໂຕ້ສຸກເສີນ ແລະ ແຜນປຸກຈິດສຳນຶກການປ່ຽນແປງດິນຟ້າອາກາດ ເຊື່ອມເຂົ້າໃນແຜນການເຄື່ອນໄຫວປະຈຳປີຂອງຕົນ;
5. ສ້າງຕັ້ງຈຸດປະສານງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ຊຸກຍູ້ການສ້າງ ແລະ ຄຸ້ມຄອງມາດຕະຖານໂຮງຮຽນປອດໄພແຫ່ງຊາດໃຫ້ໄດ້ມາດຕະຖານເທົ່າທຽມກັບພາກພື້ນ ແລະ ສາກົນເທື່ອລະກ້າວ;
7. ປະສານສົມທົບກັບກະຊວງ, ອົງການທຽບເທົ່າກະຊວງ, ຂະແໜງການ ແລະ ອຳນາດການປົກຄອງທ້ອງຖິ່ນກ່ຽວກັບການປ້ອງກັນ, ຄວບຄຸມໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງວຽກງານການສຶກສາ, ວິທະຍາສາດ ແລະ ກິລາ;
8. ຄົ້ນຄວ້າ, ປຸກລະດົມຂົນຂວາຍການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ, ທຶນຮອນ ແລະ ວັດຖຸອຸປະກອນຕ່າງໆຈາກພາຍໃນ ແລະ ຕ່າງປະເທດເພື່ອຮັບໃຊ້ເຂົ້າໃນວຽກງານປ້ອງກັນ, ຄວບຄຸມໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງການສຶກສາ ແລະ ກິລາ ຕາມລະບຽບກົດໝາຍຂອງລັດ;
9. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານປ້ອງກັນ, ຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງການເປັນແຕ່ລະໄລຍະ;
10. ຈັດກອງປະຊຸມຄະນະຮັບຜິດຊອບ, ຕິດຕາມກວດກາ ແລະ ປະເມີນຜົນໃນເວລາສຸກເສີນ, ການປົວແປງ ແລະ ຟື້ນຟູຫຼັງເກີດເຫດການສຸກເສີນ;
11. ພົວພັນ, ຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ພາກພື້ນກ່ຽວກັບວຽກງານປ້ອງກັນ, ຄວບຄຸມໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງວຽກງານການສຶກສາ, ວິທະຍສາດ ແລະ ກິລາ ຕາມລະບຽບການ;
12. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງລັດຖະມົນຕີ.

**ມາດຕາ 4 ຂອບເຂດສິດ**

ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງການສຶກສາ ແລະ ກິລາ ມີຂອບເຂດສິດດັ່ງນີ້:

1. ສະເໜີແຜນການ ແລະ ແຜນງົບປະມານເພື່ອພັດທະນາວຽກທີ່ຕົນຮັບຜິດຊອບຕໍ່ລັດຖະມົນຕີ;
2. ສະເໜີລັດຖະມົນຕີພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກຳການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດທີ່ບໍ່ສອດຄ່ອງ;
3. ແຈ້ງເຕືອນໄພສຸກເສີນລະດັບຕ່າງໆພາຍໃນຂະແໜງການສຶກສາ ແລະ ກິລາ;
4. ແຈ້ງການໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງພາຍໃນຂະແໜງການສຶກສາ ແລະ ກິລາ ກຽມພ້ອມອອກປະຕິບັດໜ້າທີ່ໃຫ້ທັນການໃນກໍລະນີເກີດມີໄພພິບັດສຸກເສີນ;
5. ສົມທົບກັບຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ, ອຳນາດການປົກຄອງ ແລະ ຄະນະກຳມະການຄຸ້ມຄອງໄພພິບັດຢູ່ຂັ້ນທ້ອງຖິ່ນເພື່ອຕ້ານ ແລະ ແກ້ໄຂບັນຫາໄພພິບັດເກີດຂຶ້ນຂັ້ນຮ້າຍແຮງ;
6. ຊີ້ນຳພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນ ແລະ ສະຖານການສຶກສາໃນການພິຈາລະນາແຕ່ງຕັ້ງຄະນະຮັບຜິດຊອບວຽກງານປ້ອງກັນ ແລະ ຄວບຄຸມໄພພິບັດຂັ້ນຕົນ;
7. ຮັບບໍລິຈາກເງິນຊ່ວຍເຫຼືອ ແລະ ວັດຖຸສິ່ງຂອງປະເພດຕ່າງໆ ຈາກບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດຕາມການອະນຸມັດຂອງລັດຖະມົນຕີ ເພື່ອປ້ອງກັນ, ຕອບໂຕ້ ແລະ ແກ້ໄຂຜົນຮ້າຍຈາກໄພພິບັດ, ໃຫ້ການຊ່ວຍເຫຼືອບັນເທົາທຸກ, ສຸກເສີນແກ່ເປົ້າໝາຍຕ່າງໆທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດ;
8. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມການອະນຸມັດຂອງລັດຖະມົນຕີ;
9. ຮຽກເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມເພື່ອຄົ້ນຄວ້າ, ປຶກສາຫາລື ແລະ ແກ້ໄຂບັນຫາຕ່າງໆກ່ຽວກັບການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ;
10. ປະຕິບັດສິດອື່ນໆຕາມການມອບໝາຍຂອງລັດຖະມົນຕີ.

**ມາດຕາ 5 ໜ້າທີ່ຂອງກອງເລຂາ**

1. ເປັນເສນາທິການໃຫ້ແກ່ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງສຶກສາ ແລະ ກິລາ;
2. ຄົ້ນຄວ້າ-ສັງລວມຮ່າງນະໂຍບາຍ, ຍຸດທະສາດ, ແຜນການ ແລະ ແຜນປະຕິບັດງານລວມທັງນິຕິກຳ ທີ່ກ່ຽວ ຂ້ອງກັບວຽກງານຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ;
3. ຊຸກຍູ້ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂອບໂຮງຮຽນປອດໄພຮອບດ້ານເຂົ້າໃນແຜນພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ;
4. ເປັນໃຈກາງໃນການປະສານງານກັບຫ້ອງການກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດ ແລະ ຄະນະຮັບຜິດຊອບການປ່ຽນແປງດິນຟ້າອາກາດລະດັບຊາດ ກ່ຽວກັບວຽກງານປ້ອງກັນ, ຄວບຄຸມໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງສຶກສາ ແລະ ກິລາ;
5. ຊຸກຍູ້ການສ້າງຂີດຄວາມສາມາດໃຫ້ຈຸດປະສານງານຂັ້ນກະຊວງ ແລະ ຂັ້ນແຂວງ ກ່ຽວກັບການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ໃນຂະແໜງການສຶກສາ ແລະ ກິລາ;
6. ປະສານກັບພາກສ່ວນທີ່ກ່ຽວຂ້ອງເກັບກຳຂໍ້ມູນ ແລະ ສັງລວມສະພາບຜົນເສຍຫາຍ ແລະ ການຮັບມືກັບໄພພິບັດຕໍ່ວຽກງານການສຶກສາ, ວິທະຍາສາດ ແລະ ກິລາໃຫ້ທັນເວລາ;
7. ເປັນເຈົ້າການໃນການຈັດກອງປະຊຸມຄົບຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດປະຈຳ 06 ເດືອນ ແລະ 01 ປີ ແລະ ກອງປະຊຸມວິສາມັນຕາມການຊີ້ນຳ;
8. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕິດຕາມ, ກວດກາ ແລະ ປະເມີນຜົນການປະຕິບັດວຽກງານຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດພາຍໃນວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ແລ້ວສະຫຼຸບ, ລາຍງານຕໍ່ຂັ້ນເທິງຢ່າງເປັນປົກກະຕິ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

ມາດຕາ 6 ໂຄງປະກອບກົງຈັກ

ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງການສຶກສາ ແລະ ກິລາ ປະກອບດ້ວຍບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໂດຍມີຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນຈຸດປະສານງານ ແລະ ເປັນກົງຈັກຊ່ວຍວຽກ.

ມາດຕາ 7 ໂຄງປະກອບບຸກຄະລາກອນ

ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດກະຊວງສຶກສາທິການ ແລະ ກິລາ ປະກອບດ້ວຍ:

I. ຄະນະຮັບຜິດຊອບຊີ້ນຳລວມ

1. ທ່ານ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນປະທານ
2. ທ່ານ ຫົວໜ້າ ຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ
3. ທ່ານ ຫົວໜ້າ ກົມແຜນການ ເປັນຮອງປະທານ
4. ທ່ານ ຫົວໜ້າ ກົມການເງິນ ເປັນຮອງປະທານ
5. ທ່ານ ຫົວໜ້າ ກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ
6. ທ່ານ ຫົວໜ້າ ກົມກວດກາ ເປັນຄະນະ
7. ທ່ານ ຫົວໜ້າ ກົມຮ່ວມມືກັບຕ່າງປະເທດ ເປັນຄະນະ
8. ທ່ານ ຫົວໜ້າ ກົມການສຶກສາກ່ອນໄວຮຽນ ເປັນຄະນະ
9. ທ່ານ ຫົວໜ້າ ກົມສາມັນສຶກສາ ເປັນຄະນະ
10. ທ່ານ ຫົວໜ້າ ກົມອາຊີວະສຶກສາ ເປັນຄະນະ
11. ທ່ານ ຫົວໜ້າ ກົມການສຶກສາຊັ້ນສູງ ເປັນຄະນະ
12. ທ່ານ ຫົວໜ້າ ກົມສ້າງຄູ ເປັນຄະນະ
13. ທ່ານ ຫົວໜ້າ ກົມການສຶກສານອກໂຮງຮຽນ ເປັນຄະນະ
14. ທ່ານ ຫົວໜ້າ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ເປັນຄະນະ
15. ທ່ານ ຫົວໜ້າ ກົມກິລາລະດັບສູງ ເປັນຄະນະ
16. ທ່ານ ຫົວໜ້າ ກົມກິດຈະການນັກສຶກສາ ເປັນຄະນະ
17. ທ່ານ ຫົວໜ້າ ກົມປະກັນຄຸນນະພາບການສຶກສາ ເປັນຄະນະ
18. ທ່ານ ຫົວໜ້າ ກົມຄຸ້ມຄອງວິທະຍາສາດ ເປັນຄະນະ
19. ທ່ານ ຮອງອະທິການບໍດີ ມະຫາວິທະຍາໄລ 4 ແຫ່ງ ເປັນຄະນະ
20. ທ່ານ ຜູ້ອຳນວຍການ ຫ້ອງການສະພາວິທະຍາສາດແຫ່ງຊາດ ເປັນຄະນະ
21. ທ່ານ ຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເປັນຄະນະ
22. ທ່ານ ຜູ້ອຳນວຍການ ສະຖາບັນພັດທະນາການບໍລິຫານການສຶກສາ ເປັນຄະນະ
23. ທ່ານ ຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ເປັນຄະນະ
24. ທ່ານ ຜູ້ອຳນວຍການ ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ເປັນຄະນະ

II. ຄະນະວິຊາການ ແລະ ກອງເລຂາ

1. ທ່ານ ຮອງຫົວໜ້າ ຫ້ອງການກະຊວງສຶກສາທິການ ແລະ ກິລາ ເປັນຮອງປະທານ
2. ທ່ານ ຮອງຫົວ ໜ້າກົມແຜນການ ເປັນຮອງປະທານ
3. ທ່ານ ຮອງຫົວໜ້າ ກົມການເງິນ ເປັນຮອງປະທານ
4. ທ່ານ ຮອງຫົວໜ້າ ກົມຈັດຕັ້ງ ແລະ ພະນັກງານ ເປັນຄະນະ

5. ທ່ານ ຮອງຫົວໜ້າ ກົມກວດກາ ເປັນຄະນະ
6. ທ່ານ ຮອງຫົວໜ້າ ກົມຮ່ວມມືກັບຕ່າງປະເທດ ເປັນຄະນະ
7. ທ່ານ ຮອງຫົວໜ້າ ກົມການສຶກສາກ່ອນໄວຮຽນ ເປັນຄະນະ
8. ທ່ານ ຮອງຫົວໜ້າ ກົມສາມັນສຶກສາ ເປັນຄະນະ
9. ທ່ານ ຮອງຫົວໜ້າ ກົມອາຊີວະສຶກສາ ເປັນຄະນະ
10. ທ່ານ ຮອງຫົວໜ້າ ກົມການສຶກສາຊັ້ນສູງ ເປັນຄະນະ
11. ທ່ານ ຮອງຫົວໜ້າ ກົມສ້າງຄູ ເປັນຄະນະ
12. ທ່ານ ຮອງຫົວໜ້າ ກົມການສຶກສານອກໂຮງຮຽນ ເປັນຄະນະ
13. ທ່ານ ຮອງຫົວໜ້າ ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ ເປັນຄະນະ
14. ທ່ານ ຮອງຫົວໜ້າ ກົມກິລາລະດັບສູງ ເປັນຄະນະ
15. ທ່ານ ຮອງຫົວໜ້າ ກົມກິດຈະການນັກສຶກສາ ເປັນຄະນະ
16. ທ່ານ ຮອງຫົວໜ້າ ກົມປະກັນຄຸນນະພາບການສຶກສາ ເປັນຄະນະ
17. ທ່ານ ຮອງຫົວໜ້າ ກົມຄຸ້ມຄອງວິທະຍາສາດ ເປັນຄະນະ
18. ທ່ານ ຮອງຫົວໜ້າ ຫ້ອງການສະພາວິທະຍາສາດແຫ່ງຊາດ ເປັນຄະນະ
19. ທ່ານ ຮອງຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເປັນຄະນະ
20. ທ່ານ ຮອງຜູ້ອຳນວຍການ ສະຖາບັນພັດທະນາການບໍລິຫານການສຶກສາ ເປັນຄະນະ
21. ທ່ານ ຮອງຜູ້ອຳນວຍການ ສູນເຕັກໂນໂລຊີຂ່າວສານ ແລະ ການສື່ສານການສຶກສາ ແລະ ກິລາ ເປັນຄະນະ
22. ທ່ານ ຮອງຜູ້ອຳນວຍການ ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ເປັນຄະນະ
25. ທ່ານ ຮອງຫົວໜ້າພະແນກ ສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ເປັນຄະນະ
26. ທ່ານ ຫົວໜ້າພະແນກບໍລິຫານບັນດາກົມ, ສະຖາບັນ ແລະ ສູນ ທີ່ກ່ຽວຂ້ອງ ເປັນຄະນະ
27. ທ່ານ ຫົວໜ້າຫ້ອງການ ມະຫາວິທະຍາໄລແຫ່ງຊາດ ເປັນຄະນະ
28. ທ່ານ ຫົວໜ້າຫ້ອງການສັງລວມ ແລະ ຮ່ວມມື ມະຫາວິທະຍາໄລສະຫວັນນະເຂດ ເປັນຄະນະ
29. ທ່ານ ຫົວໜ້າຫ້ອງການບໍລິຫານ ແລະ ສັງລວມ ມະຫາວິທະຍາໄລຈຳປາສັກ ເປັນຄະນະ
30. ທ່ານ ຫົວໜ້າຫ້ອງການບໍລິຫານ-ສັງລວມ ເລຂານຸການ ມະຫາວິທະຍາໄລສຸພານຸວົງ ເປັນຄະນະ
31. ທ່ານ ຫົວໜ້າພະແນກ ແລະ ພະນັກງານ ພະແນກຄົ້ນຄວ້າ-ສັງລວມ, ຫ້ອງການ ເປັນກອງເລຂາ

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 8 ຫຼັກການເຮັດວຽກ

ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງການສຶກສາ ແລະ ກິລາ ເຄື່ອນໄຫວວຽກງານຕາມຫຼັກການ ດັ່ງນີ້:

1. ຍຶດໝັ້ນໃນແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ;
2. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ປະຕິບັດລະບອບຫົວໜ້າດຽວ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ, ລັດຖະກອນໃນການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ;
3. ພົວພັນ, ປະສານງານ ແລະ ຮ່ວມມືກັບບັນດາກົມ, ອົງການເທົ່າກົມ, ສະຖາບັນ, ສູນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງຕ່າງໆທັງພາກລັດ ແລະ ເອກະຊົນປະຕິບັດຕາມພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຕາມການເຫັນດີຂອງລັດຖະມົນຕີ.

ມາດຕາ 9 ແບບແຜນວິທີເຮັດວຽກ

1. ເຮັດວຽກຕາມຍຸດທະສາດ, ມີແຜນການ, ແຜນງານ ແລະ ໂຄງການລະອຽດ ທີ່ມີຈຸດສຸມ ແລະ ເປົ້າໝາຍແຕ່ລະໄລຍະຊັດເຈນ;
2. ເຮັດວຽກມີການຕິດຕາມ, ກວດກາ, ປະເມີນຜົນ, ຊຸກຍູ້, ສົ່ງເສີມ, ສະຫຼຸບຕີລາຄາຖອດຖອນບົດຮຽນໃນແຕ່ລະໄລຍະ ພ້ອມທັງລາຍງານໃຫ້ຂັ້ນເທິງຮັບຊາບ;
3. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານ, ຈັດຕັ້ງກອງປະຊຸມຄົບຄະນະປະຈຳ 06 ເດືອນ ແລະ 01 ປີ ເພື່ອສະຫຼຸບຖອດຖອນບົດຮຽນ, ວາງທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ, ຖ້າມີຄວາມຈຳເປັນສາມາດເປີດກອງປະຊຸມສະໄໝວິສາມັນໄດ້.

## ໝວດທີ 5
## ບົດບັນຍັດສຸດທ້າຍ

ມາດຕາ 10 ງົບປະມານ ແລະ ຕາປະທັບ

ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດມີງົບປະມານຮັບໃຊ້ວຽກງານຂອງຕົນ ຊຶ່ງໄດ້ມາຈາກງົບປະມານຂອງກະຊວງສຶກສາທິການ ແລະ ກິລາ, ການຊ່ວຍເຫຼືອ, ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ ແລະ ການປະກອບສ່ວນຂອງນິຕິບຸກຄົນ ແລະ ບຸກຄົນທົ່ວໄປ.

ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ນຳໃຊ້ຕາປະທັບຂອງກະຊວງສຶກສາທິການ ແລະ ກິລາ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

ມາດຕາ 11 ການຜັນຂະຫຍາຍ

ຄະນະຮັບຜິດຊອບວຽກງານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ທີ່ຖືກແຕ່ງຕັ້ງໃນມາດຕາ 07 ຈົ່ງພ້ອມກັນປະຕິບັດໜ້າທີ່ຂອງໃຜລາວ ພ້ອມທັງກຳນົດໜ້າທີ່ ແລະ ກິດຈະກຳລະອຽດກ່ຽວກັບການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງພາກສ່ວນຕົນຮັບຜິດຊອບ ແລະ ແຕ່ງຕັ້ງຜູ້ປະສານງານໃນຂັ້ນຂອງຕົນຕາມລະບຽບການ.

ມາດຕາ 12 ການຈັດຕັ້ງປະຕິບັດ

ຫ້ອງການ, ບັນດາກົມ, ອົງການເທົ່າກົມ, ສະຖາບັນ, ສູນ, ມະຫາວິທະຍາໄລ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ, ນະຄອນລວມທັງຫົວໜ່ວຍການສຶກສາ ແລະ ກິລາ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

ມາດຕາ 13 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຮັບຜິດຊອບວຽກງານປ້ອງກັນ, ຄວບຄຸມໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດຂອງຂະແໜງການສຶກສາ ແລະ ກິລາ ສະບັບເລກທີ 1484/ສສກ, ລົງວັນທີ 22 ເມສາ 202021.

ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ

ບ່ອນສົ່ງ:

| | |
|---|---|
| - ຫ້ອງການກະຊວງ | 1 ສະບັບ |
| - ກົມ ແລະ ທຽບເທົ່າກົມບ່ອນລະ | 1 ສະບັບ |
| - ມະຫາວິທະຍາໄລ 4 ແຫ່ງ | 1 ສະບັບ |
| - ສະຖາບັນ, ສູນບ່ອນລະ | 1 ສະບັບ |
| - ພະແນກ ສສກ ແຂວງ/ນະຄອນຫຼວງບ່ອນລະ | 1 ສະບັບ |
| - ສຳເນົາ | 2 ສະບັບ |